# ຊີວິດໃນສົງຄາມ



ໂດຍ: ຜ.ໄຜ່ບ້ານປ່າ

# ຊີວິດໃນສົງຄາມ



ກວດແກ້ ແລະ ຫຼົງປົກ:

ປິຕິ ທີວາຊິນ

ພາບປະກອບ:

ປິຕິ ທີວາຊິນ

ບົວລິນ ອິນທິທະວົງ

# ສາລະບານ

*ບົດສະເໜີ ........................................................ ໜ້າ 2

*ຕອນທີ່ໜຶ່ງ: ບ້ານເກີດ ........................................... ໜ້າ 5

*ຕອນທີ່ສອງ: ຄອບຄົວ ........................................... ໜ້າ 32

*ຕອນທີ່ສາມ: ຊຶ່ນຊີມລະບອບໃໝ່ .............................. ໜ້າ 59

*ຕອນທີ່ສີ່: ສົງຄາມ ................................................ ໜ້າ 81

*ຕອນທີ່ຫ້າ: ການບ້າສົງຄາມ.................................... ໜ້າ109

*ຕອນທີ່ຫົກ: ໃນຖັນແຖວ........................................... ໜ້າ130

*ຕອນທີ່ເຈັດ: ໄຊຊະນະ............................................. ໜ້າ157

# ບົດສະເໜີ

ຄົນເຮົາທຸກຄົນບໍ່ມີໃຜດອກທີ່ຢາກຈະເອົາຊີວິດຂອງຕົນໄປປະເຊີນກັບສົງຄາມ. ຍ້ອນທົນຕໍ່ການຖືກບັງຄັບຂົ່ມເຫັງ ແລະ ກົດຂີ່ຂອງພວກຈັກກະພັດຕໍ່ໄປບໍ່ໄດ້ອີກນັ້ນ, ປະຊາຊົນຊາວເມືອງວັງ-ນາຍົມ(ເມືອງວັງ)ທີ່ເປັນສ່ວນໜຶ່ງຂອງເມືອງວັງ-ອ່າງຄຳໃນເມື່ອກ່ອນ, ພ້ອມກັບເມືອງຕ່າງໆພາຍໃນແຂວງສະຫວັນນະເຂດຈຶ່ງລຸກຂຶ້ນຕໍ່ສູ້. ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງສູນກາງແນວລາວອິດສະຫຼະ, ເຊິ່ງແມ່ນແນວລາວຮັກຊາດໃນເວລາຕໍ່ມາ, ການຕໍ່ສູ້ຂອງປະຊາຊົນໄດ້ກາຍເປັນຂະບວນການປະຕິວັດທີ່ດຸເດືອດ ແລະ ແຂງແຮງ. ແຕ່ຍ້ອນຄວາມອຳມະຫິດ, ພວກເຂົາມອງເມືອງວັງ-ນາຍົມກໍຄືທົ່ວທັງແຂວງສະຫັວນນະເຂດເວລານັ້ນ, ຄືກັບ "ຊີ້ນຕ່ອນໜາ!ປາຕ່ອນໃຫຍ່!"ພວກເຂົາຈຶ່ງບໍ່ລາມືໂດຍງ່າຍ. ດັ່ງນັ້ນເມື່ອພວກຈັກກະພັດທີ່ນຳລັດທິລ່າເມືອງຂຶ້ນແບບເກົ່າປະລາໄຊ ແລະ ຖືກບັງຄັບໃຫ້ໜີອອກໄປ, ແຕ່ຈັກກະພັດອາເມຣິກາພັດນຳລັດທິລ່າເມືອງຂຶ້ນແບບໃໝ່ເຂົ້າມາແທນບ່ອນໂລດ. ພວກເຂົາຫວັງຢຶດຄອງ ແລະ ກອບໂກຍ "ຊັບໃນດິນ!ສິນໃນປ່າ!"ຂອງພວກເຮົາຕໍ່ໄປອີກນານ.

ຍ້ອນແນວນັ້ນ, ປະຊາຊົນບ້ານຕ່າງໆ, ເມືອງຕ່າງໆໃນທົ່ວແຂວງສະຫວັນນະເຂດຈຶ່ງຖືກພວກຈັກກະພັດຕ່າງດ້າວ, ທ່ວງດຶງເຂົ້າວົງຈອນສົງຄາມຂອງພວກເຂົາຢ່າງຫຼີກບໍ່ພົ້ນ. ຢູ່ໃນນັ້ນມີບ້ານປ່າຜັກເໜົ່າ, ນາສະເລາະເຫຼົ່າຫຼວງ, ນາຊູ ແລະ ຫຼາຍໆບ້ານຂອງເຂດປົດປ່ອຍໄດ້ກາຍເປັນ"ສະໜາມລະພູມເລືອດ"ຢ່າງໜັກໜ່ວງ. ສົງຄາມໄດ້ແກ່ດຶງທັງຊີວິດ ແລະ ອິນຊີຂອງເຂົາເຈົ້າຈົນນັບບໍ່ຖ້ວນ. ຫຼາຍຄອບຄົວພໍ່, ແມ່, ລູກຫຼານລວມທັງຍາດ

ພີ່ນ້ອງໄດ້ລົ້ມຫາຍຕາຍຈາກ. ເດັກນ້ອຍອານຸຊົນຫຼາຍຄົນ, ເຊິ່ງນັບແຕ່ເວລາກຳເນີດ ແລະ ໃຫຍ່ຂຶ້ນ, ຕ້ອງປະເຊີນໂດຍກົງກັບລູກລະເບີດຂອງພວກຈັກກະພັດ. ອັນເຮັດໃຫ້ເດັກເຫຼົ່ານັ້ນ, ປະສົບເຫດຮ້າຍ ແລະ ເກີດເຈັບເປັນລົ້ມຕາຍມາແລ້ວນັບບໍ່ຖ້ວນ. ເດັກຫຼາຍຄົນ, ເຖິງເອົາຕົວລອດມາໄດ້ແຕ່ຮ່າງກາຍກໍຄືຈິດໃຈ, ເຕັມໄປດ້ວຍຮອຍແຜ ແລະ ຄວາມເຈັບປວດ.

ເວົ້າສະເພາະຕົວຂ້າພະເຈົ້າເອງນັ້ນ, ຍ້ອນກຳເນີດ ແລະ ໃຫຍ່ຂຶ້ນໃນໄລຍະປະເທດຊາດຕົກເຂົ້າຍຸກສະໄໝສົງຄາມທຳລາຍຂອງຈັກກະພັດ. ຂ້າພະເຈົ້າຈຶ່ງທົດສອບຜ່ານແປວໄຟແຫ່ງສົງຄາມດັ່ງກ່າວນັ້ນຢ່າງສາຫັດ. ສົງຄາມໄດ້ບັງຄັບໃຫ້ຂ້າພະເຈົ້າ, ຕ້ອງຮຽນຮູ້ວິທີເອົາຕົວລອດແຕ່ເຍົາໄວ. ເຖິງລອດຊີວິດມາໄດ້, ແຕ່ຮ່າງກາຍ ແລະ ຈິດໃຈຂອງຂ້າພະເຈົ້າກໍເຈັບປວດ. ຈັກກະພັດອາເມຣິກາ, ຍິ່ງເພີ່ມການພົ່ນອາຍພິດເຄມີ ແລະ ຖິ້ມລະເບີດຍິງທຳລາຍຫຼາຍເທົ່າໃດ, ຄວາມເຈັບປວດຂອງຂ້າພະເຈົ້າກໍຍິ່ງໜັກໜ່ວງເທົ່ານັ້ນ. ຍ້ອນການດຳລົງຊີວິດທີ່ຕ້ອງເປັນໄປແບບໝູບໆຄານໆ, ເພື່ອຫຼີກການຍິງທຳລາຍກໍຄືການພົ່ນອາຍພິດເຄມີຂອງພວກຈັກກະພັດຄືດັ່ງກ່າວ, ຂ້າພະເຈົ້າຈຶ່ງບໍ່ມີໂອກາດທີ່ຈະໄດ້ຮັບການສຶກສາກໍຄືການຮຽນຮູ້ແບບເປັນລະບົບແຕ່ເຍົາໄວ.

ເຖິງສົງຄາມຜ່ານໄປ, ແຕ່ພິດຮ້າຍຍັງນຳຕາມຂ້າພະເຈົ້າມາ. ນັ້ນແມ່ນພາບການຖິ້ມລະເບີດ ແລະ ພາບການພົ່ນອາຍພິດເຄມີ, ຍັງຫຼອກຫຼອນຂ້າພະເຈົ້າຢ່າງລືມບໍ່ລົງ. ຫວນພໍ້ຄັ້ງໃດ, ພາບສະຫຍອງຂັວນດັ່ງກ່າວ, ເໝືອນຈໍຮູບເງົາອັນຍາວຢຽດປະກົດໃນຄວາມຊົງຈຳຂອງຂ້າພະເຈົ້າຄັ້ງນັ້ນ. ຍ້ອນຢາກໃຫ້ທ່ານຮູ້ວ່າ, ສົງຄາມໄດ້ປະທັງຮອຍແຜ ແລະ ຄວາມເຈັບປວດ

ໃຫ້ກັບຂ້າພະເຈົ້າແນວໃດນັ້ນ. ຂ້າພະເຈົ້າຈຶ່ງສະເໜີບົດຂຽນ"ຊີວິດໃນສົງຄາມ"ເຊິ່ງເປັນປະສົບການສ່ວນໜຶ່ງຂອງບ້ານເກີດກໍຄືຄອບຄົວ, ພ້ອມຊີວິດສ່ວນຕົວຂອງຂ້າພະເຈົ້າມາຍັງທ່ານຜູ້ອ່ານນະທີ່ນີ້. ຂໍທ່ານເຂົ້າໃຈວ່າຊີວິດໃນສົງຄາມແມ່ນແນວນັ້ນແທ້.

ດ້ວຍຄວາມນັບຖື ແລະ ຮັກແພງ!

# ຕອນທີ່ໜຶ່ງ

## ບ້ານເກີດ

ເມື່ອກ່ອນບ້ານປ່າຜັກເໜົ່າຂຶ້ນກັບຕາແສງນາຍົມ, ຕໍ່ມາຂຶ້ນກັບຕາແສງນາສະເລາະ, ປັດຈຸບັນຂຶ້ນກັບເຂດຈຸດສຸມເມືອງວັງ, ເມືອງວິລະບູລີ, ແຂວງສະຫວັນນະເຂດ. ບ້ານປ່າຜັກເໜົ່າ, ຕັ້ງຢູ່ເຂດທົ່ງເຊບາຍຕອນລຸ່ມ ແລະ ຫ່າງຈາກຕີນພູຊ້າງແຫ່ໄປທາງທິດຕາເວັນອອກ, ປະມານສາມກິໂລແມັດ. ຢູ່ທາງທິດຕາເວັນຕົກສ່ຽງເໜືອຂອງບ້ານ, ມີແມ່ນ້ຳເຊບາຍໄຫຼປ້ອງສາຍເຊນ້ອຍ. ອັນເຮັດໃຫ້ບ້ານມີຄວາມອຸດົມສົມບູນ, ດິນດຳນ້ຳຊຸ່ມ "ວັງນ້ຳເປັນບໍ່ປາ!ທົ່ງນາເປັນບໍ່ເຂົ້າ!", ປະຊາຊົນຍຸທ່າງທຳມາຫາກິນດ້ວຍຄວາມຢູ່ເຢັນເປັນສຸກ. ເສັ້ນທາງຄົມມະນາຄົມກໍຄືລະບົບການຕິດຕໍ່ສື່ສານໄຟຟ້າ, ຊົນລະປະທານເລີ່ມມີການພັດທະນາ, ອັນເຮັດໃຫ້ການຕິດຕໍ່ພົວພັນ, ການໄປມາຄ້າຂາຍສະດວກສະບາຍກ່ວາແຕ່ກ່ອນ.

ເມື່ອຍ້ອນກັບສູ່ອາດີດ, ປ່າຜັກເໜົ່າຢູ່ຮ່ວມບ້ານດຽວກັນກັບນາສະເລາະຂອງເມືອງວັງ-ອ່າງຄຳ, ປັດຈຸບັນເອີ້ນວ່າເມືອງວິລະບູລີ, ແຂວງສະຫວັນນະເຂດ. ຢູ່ໃຕ້ການປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງເປັນເວລາຫຼາຍສິບປີມານັ້ນ, ປະຊາຊົນຊາວບ້ານບໍ່ເຄີຍໄດ້ຈາກພວກເຂົາ. ຍ້ອນພວກຝຣັ່ງບໍ່ຫົວຊາ, ໃນການພັດທະນາເຂົາເຈົ້າແຕ່ຢ່າງໃດ. ພວກເຂົາມີແຕ່ບັງຄັບເກັບສ່ວຍ, ພ້ອມເງິນຄ່າໄຖ່ການນຳພວກຜູ້ຊາຍຊາວບ້ານ, ອາຍຸແຕ່ສິບແປດຫາຫົກສິບປີ, ຕາມລະບອບໄຖ່ການ ແລະ ເງິນສ່ວຍທີ່ພວກເຂົາຕັ້ງຂຶ້ນຕົກເປັນເງິນຜູ້ໜຶ່ງເກີບກັບ60ອັດ(ເງິນກີບເກົ່າ)ຕໍ່ປີ.

ຕາມການບອກເລົ່າຂອງພວກປູ່, ພວກຕາທີ່ໄດ້ຜ່ານການດຳລົງຊີ



ພາບປະກອບ: ປະຊາຊົນ ເປັນກຸລີສ້າງທາງເລກ 9

ວິດມາແຕ່ສະໄໝຝຣັ່ງປົກຄອງພຸ້ນວ່າ"ສ່ວຍປະຈຳຕົວຜູ້ລະ2ກີບກັບ 50ອັດ, ສ່ວຍໃຫ້ພໍ່ບ້ານ, ຕາແສງ ແລະ ຄ່າໄຖ່ການ4ກີບສ່ວຍພາສີເຫຼົ້າ 10ອັດ". ຖ້າຜູ້ໃດບໍ່ມີເງິນໃຫ້ຄ່າໄຖ່ການ, ຜູ້ນັ້ນຕ້ອງໄປເຮັດວຽກສັບພະທຸກ16ຫຼື20ວັນ, ແລ້ວແຕ່ລະກໍລະນີ. ການໄປເຮັດວຽກ, ເພື່ອແທນຄ່າໄຖ່ການ, ໂດຍສະເພາະການໄປເຮັດງານກໍ່ສ້າງເສັ້ນທາງເລກທີ9ນັ້ນ, ຊາວບ້ານຕ້ອງໄດ້ຍ່າງທາງໄກ, ເປັນເວລາສອງຫຼືສາມວັນຈຶ່ງຮອດຈຸດທຳງານ. ຜູ້ໄປທຳງານຕ້ອງໄດ້ຫາບເຄື່ອງຢູ່ຂອງນອນ, ກໍຄືເຂົ້ານ້ຳ ແລະ ສະບຽງອາຫານໄປແຕ່ງກິນເອງຈົນຕະຫຼອດໄລຍະຂອງວັນງານດັ່ງກ່າວ.

ສ່ວນສ່ວຍປະຈຳຕົວ2ກີບກັບ50ອັດນັ້ນຂາດບໍ່ໄດ້, ຖ້າໃຜບໍ່ມອບ, ຖືເປັນຄວາມຜິດທາງອາຍາຂັ້ນຮ້າຍແຮງ ແລະ ຕ້ອງຖືກໂທດຈຳ

ຄຸກ. ການກະທຳຂອງພວກເຂົາທີ່ມີຕໍ່ຊາວບ້ານຫຼາຍກ່ວາໝູ່ແມ່ນ, ຈັບເຂົ້າຄຸກເຂົ້າຄາ ແລະ ທຸບຕີ, ທໍລະມານຈົນກ່ວາຈະໄດ້ເງິນຕາມການຈັດເກັບ, ພວກເຂົາຈຶ່ງໃຫ້ພົ້ນຈາກໂທດໃນປີນັ້ນ. ໄປພ້ອມກັບການໃຫ້ຄ່າສ່ວຍປະຈຳປີ ແລະ ຄ່າໄຖ່ການນັ້ນ, ຊາວບ້ານຍັງຖືກເກນໄປເປັນກຸລີຫາມຝຣັ່ງພ້ອມບໍລິວານຕື່ມອີກ.

ການໄປເຮັດວຽກແຕ່ລະບ່ອນ, ເຊິ່ງລວມທັງການຂຶ້ນພູຊ້າງແຫ່ເພື່ອປະຈຳດ່ານກວດກາຢູ່ດານທະຫານຫຼືການເດີນທາງຂ້າມໄປເມືອງອາດສະພອນພຸ້ນກໍຄືກັນ, ຊາວບ້ານຕ້ອງຫາມສິ່ງພວກເຂົາເຖິງຈຸດທີ່ໝາຍໃນທຸກຄັ້ງ. ເວົ້າສະເພາະການດູແລໝາໃຫ້ຝຣັ່ງນັ້ນ, ຊາວບ້ານຕ້ອງໄດ້ຖະໜອມພຽນເປັນພິເສດ. ເພາະຝຣັ່ງແພງໝາ, ເໝືອນຊີວິດຂອງເຂົາເອງ. ສະນັ້ນມື້ໃດຝຣັ່ງຂີ່ມ້າອອກສາລະເວທັງອູ້ມໝາມາພ້ອມ, ມື້ນັ້ນຊາວບ້ານຕ້ອງ"ເປັນຂ້ອຍ"ລ້ຽງມ້າ, ທັງລ້ຽງໝາໃຫ້ຝຣັ່ງຢ່າງເຕັມພາລະ. ເວົ້າສຳລັບອາຫານການກິນນັ້ນ, ເຖິງພວກຝຣັ່ງຈະມີອາຫານທີ່ພວກມັນເກນຄົນບ້ານອື່ນຫາມສິ່ງເຫຼືອເຟືອຢູ່ແລ້ວກໍຕາມ, ແຕ່"ພວກອາດຍາ!ເຈົ້ານາຍ!"ຢູ່ໃນບ້ານ, ຍັງວິ່ງເຕັ້ນຊອກຫາເກັບຫຼືເກນນຳຊາວບ້ານຕື່ມອີກ. ເປັນຕົ້ນແມ່ນ, ສັດລ້ຽງຂອງຊາວບ້ານຄື, ໝູນ້ອຍ ແລະ ໄກ່ຕີນເຫຼືອງທີ່ຝຣັ່ງນິຍົມຮັບປະທານຫຼາຍທີ່ສຸດນັ້ນ, ຍິ່ງຖືກພວກອາດຍາເພິ່ນ, ຊອກຫາເກັບຫຼືເກນນຳຊາວບ້ານຫຼາຍກ່ວາໝູ່.

ຍ້ອນແນວນັ້ນຊາວບ້ານຈຶ່ງເວົ້າວ່າ, ຝຣັ່ງ ແລະ ໝາຂອງເຂົາຈຶ່ງກິນອາຫານທີ່ມີລົດຊາດແຊບກ່ວາອາຫານຂອງເຂົາເຈົ້າ. ຖ້າຮັບໃຊ້ບໍ່ຖືກໃຈມື້ນັ້ນຕ້ອງລະວັງ, ເພາະຝຣັ່ງຈະບໍ່ໄວ້ໜ້າຜູ້ໃດທັງນັ້ນ. ນັບຕັ້ງແຕ່ນາຍ

ບ້ານໄປຈົນຮອດຜູ້ອາວຸໂສບ້ານ, ທຸກຄົນຕ້ອງຖືກຝຣັ່ງສັ່ງສອນຢ່າງຫຼົກບໍ່ມົ້ມ. ຄວາມຈິງຄໍາວ່າການ"ສັ່ງສອນ!"ນັ້ນ, ມັນແມ່ນການຂ້ຽນ, ຕີຫຼືດ່າປ້ອຍຈົນພໍໃຈນາຍໃຫຍ່, ພວກເຂົາຈຶ່ງເຊົາ. ຈາກຮັບໃຊ້ຢ່າງເງີຍຄໍບໍ່ໄດ້ນັ້ນຈຶ່ງເຮັດໃຫ້ຊີວິດການເປັນຢູ່ຂອງຊາວບ້ານ, ຍິ່ງທຸກຈົນລົງໄປຕື່ມ. ຫຼາຍຄອບຄົວເຂົ້າບໍ່ມີໃສ່ແລງ, ແກງບໍ່ມີໃສ່ໝໍ້, ລ້ຽງໄກ່ໄວ້ດ້າມໂຕ, ລ້ຽງໝູໄວ້ດ້າມໂຕເພື່ອແກ້ໄຂໃນເວລາເຈັບເປັນ, ກໍຕ້ອງໄດ້"ມອບ"ໄດ້"ເຄນ"ໃຫ້ພວກຝຣັ່ງຈົນກ້ຽງຈຶ່ງໄດ້ເຊົາ.

ນອກນັ້ນພວກເຂົາຍັງບັງຄັບໃຫ້ຊາວບ້ານ, ຕ້ອງຮັບເອົາການເຜີຍແຜ່ວັດທະນະທໍາລາມົກແບບຕາເວັນຕົກຂອງພວກເຂົາ. ເພາະການເດີນທາງຈາກເຊໂນຫຼືເຊໂປນແຕ່ລະຄັ້ງ, ພວກເຂົາມັກຈະເອົາຍິງສາວມານໍາ. ຈໍາພວກ"ນາງນົກຣາຕີ!"ເຫຼົ່ານັ້ນ, ບາງເທື່ອກໍເປັນຄົນລາວ, ແຕ່ຫຼາຍຄັ້ງກໍເປັນຝຣັ່ງຄືກັນ. ເວລາມາເຊົາຢູ່ເຮືອນຊາວບ້ານແລ້ວ, ພວກເຂົາຈະທໍາສິ່ງລາມົກຕ່າງໆຕໍ່ໜ້າຕໍ່ຕາຊາວບ້ານ. ຈົນກະທັ້ງການຖ່າຍໜັກຫຼືເບົາພວກເຂົາກໍມັກຈະເອົາກັບເຮືອນໂລດ. ຫຼາຍກໍລະນີພວກເຂົາຍັງຖ່າຍນໍ້າປັດສະວະ, ອອກປາກຕູປ່ອງທາງໜ້າເຮືອນເລີຍ. ສິ່ງເຫຼົ່ານີ້ເຮັດໃຫ້ຊາວບ້ານເບື່ອພວກເຂົາຫຼາຍທີ່ສຸດ. ເພາະການກະທໍາຂອງພວກເຂົາຖືເປັນການດູຖູກ, ໝິ່ນປະໝາດ ແລະ ຢຽບຢໍ່າກຽດສັກສີກໍຄືປະເພນີວັດທະນະທໍາອັນດີງາມທີ່ຊາວບ້ານນັບຖືຈົນກາຍເປັນຂະນົບ-ທໍານຽມມາແລ້ວນັ້ນຢ່າງໜັກໜ່ວງ. ການເຜີຍແຜ່ວັດທະນະທໍາລາມົກ, ຖືເປັນການລະເມີດຈິດໃຈຂອງຊາວບ້ານແບບບັງອາດ ແລະ ເປີດແປນທີ່ສຸດ.

ບ້ານເມືອງຕົກເຂົ້າໃນສະພາບອໍລະຫົນ, ຈົນຕາແຈ, ປະຊາຊົນບໍ່ຮູ້

ຮ່ອມທາງທີ່ຈະເອົາຕົວລອດ. ຮ້າຍແຮງທີ່ສຸດແມ່ນລະດູແລ້ງປີ1933ທົ່ວເຂດເມືອງວັງ-ອ່າງຄຳ, ໄດ້ເກີດລະບາດພະຍາດໝາກສຸກຢ່າງຮ້າຍແຮງ ປະຊາຊົນບ້ານນາສະເລາະ ແລະ ບ້ານໃກ້ຄຽງກັບທົ່ງເຊບາຍຕອນລຸ່ມເກີດເຈັບເປັນລົ້ມຕາຍເປັນຈຳນວນຫຼວງຫຼາຍ. ຊາວບ້ານຈຶ່ງແຕກສະລຸຜຸຜ່າຍໜີຈາກບ້ານ, ອອກອາໄສຕາມຖຽງນາ, ຖຽງສວນຂອງໃຜລາວເພື່ອເອົາຕົວລອດ. ຈົນຮອດປີ1934, ເຂົາເຈົ້າຈຶ່ງຍ້າຍຮ່ວມເຂົ້າເປັນສາມບ້ານຕ່າງກັນ. ໃນນັ້ນມີນາສະເລາະທີ່ເປັນບ້ານດັ້ງເດີມ ແລະ ບ້ານຍ້າຍມາຕັ້ງຢູ່



ພາບປະກອບ: ບ້ານປ່າຜັກເໜົ່າ ໃນສະໄໝຝຣັ່ງປົກຄອງ

ໃໝ່ອີກສອງບ້ານຄື, ບ້ານປ່າຜັກເໜົ່າ ແລະ ບ້ານຫົວຂົວ(ຫົວຂົວແປ້ນ). ຕໍ່ມາບ້ານຫົວຂົວແປ້ນໄດ້ຍ້າຍຮ່ວມເຂົ້າກັບນາສະເລາະຄືນ, ຈຶ່ງເຮັດໃຫ້

ເຂດທີ່ງເຊບາຍຕອນລຸ່ມ, ຍັງມີແຕ່ສອງບ້ານດ້ອຍກັນຄື, ນາສະເລາະ ແລະ ບ້ານປ່າຜັກເໜົ່າຈົນເທົ່າທຸກມື້ນີ້. ນັ້ນແມ່ນໄລຍະປະຫວັດສາດ, ທີ່ຕິດພັນກັບການສ້າງຕັ້ງບ້ານປ່າຜັກເໜົ່າໃນອາດີດ.

ເຖິງຊາວບ້ານຈະທຸກຍາກຍ້ອນການລະບາດຂອງພະຍາດ, ແຕ່ການຂູດຮີດການເກັບເກນຂອງຝຣັ່ງກໍຍັງບໍ່ລົດລະ. ຫຼາຍຄົນຈໍາເປັນຕ້ອງຫາກູ້ຫາຢືມ, ຫາຊອດ, ຫາຈໍາຕິດໜີ້ຕິດສິນຈົນສິ້ນເນື້ອປະດາຕົວກໍມີ. ການເກີດລະບາດຂອງໝາກສຸກ ແລະ ການເຈັບເປັນ, ລົ້ມຕາຍເປັນຈໍານວນຫຼວງຫຼາຍ, ບວກກັບການຖືກບັງຄັບໃຫ້ມອບເງິນຄ່າສ່ວຍນັ້ນເຮັດໃຫ້ຊາວບ້ານ, ແຄ້ນຝຣັ່ງເຫຼືອທີ່ສຸດ. ເພາະນາຍ"ຝຣັ່ງ"ບໍ່ໄດ້ເອົາຫົວຊາຕໍ່ການເຈັບເປັນ, ລົ້ມຕາຍຂອງຊາວບ້ານແຕ່ຢ່າງໃດ. ໜ້າທີ່ຂອງພວກເຂົາແມ່ນການຫາເອົາເງິນຄື, ເກັບສ່ວຍກໍເອົາເງິນ ແລະ ໄຖ່ການກໍເອົາເງິນ. ເງິນຂອງພວກເຂົາ, ຕັ້ງແມ່ນເລືອດ ແລະ ນໍ້າຕາອັນໄສໆຂອງຊາວບ້ານພວກເຮົາ. ກົງກັນຂ້າມ, ຊັບສິນ ແລະ ກໍາລັງກາຍຂອງຊາວບ້ານນັ້ນ, ພວກເຂົາຖືຄືສິ່ງທີ່ໄຮ້ຄ່າ. ພວກເຂົາເອົາລ້າໆກິນລ້າໆ ແລະ ໃຊ້ລ້າໆ.

ດັ່ງບົດ"ຫອນຄືນຄາວຫຼັງ"ຂອງທ່ານສອນ ຄໍາວານວົງສາ, ອາດີດກໍາມະການສູນກາງພັກ, ອາດີດລັດຖະມົນຕີວ່າການກະຊວງຖະແຫຼງຂ່າວ-ວັດທະນະທໍາ, ເຊິ່ງທ່ານເອງກໍເປັນລູກເປັນຫຼານຂອງຊາວບ້ານນາສະເລາະຄົນໜຶ່ງ, ທີ່ໄດ້ສະຫຼະຄອບຄົວໄປສູ່ການປະຕິວັດກ່ອນປີ1954 ພຸ້ນຂຽນວ່າ"ຝຣັ່ງມາເປັນນາຍຢູ່ປະເທດເຮົາດົນແລ້ວມີແຕ່ເກັບເງິນຄ່າຫົວປະຈໍາປີເກັບໄປການປີລະສອງເທື່ອຖ້າເທື່ອໃດຝຣັ່ງມາສາລະເອເຈົ້ານາຍອອກມາກໍຕ້ອງໄດ້ເສຍໝູເສຍໄກ່ເລື້ອຍໆ". ຂະໜາດໃນກາງປີ

1945ຍ້ອນຢ້ານພວກຂຸນເສິກຍີ່ປຸ່ນ, ຝຣັ່ງສາມຄົນໄດ້ມາອາໄສ"ລີ້ໄພ"ຢູ່ບ້ານນາສະເລາະເປັນເວລາສາມເດືອນນັ້ນ, ສະເພາະຄອບຄົວພໍ່ແມ່ຂອງທ່ານສອນເອງ"ຝຣັ່ງໄດ້ເກນເອົາງົວໝົດຫ້າໂຕ, ຄວາຍໜຶ່ງໂຕ ແລະ ໝູອີກສາມໂຕບໍ່ໃຫ້ເງິນຈັກອັດເລີຍ, ຢາກໂຕໃດກໍຍິງເອົາໂລດ". ນອກນັ້ນບໍ່ວ່າງົວຂອງໃຜ, ຄວາຍຂອງຄອບຄົວໃດ, ເປັດໄກ່ຂອງຜູ້ໃດ ແລະ ຕ້ອງການເວລາໃດ, ຝຣັ່ງກໍສັ່ງການອອກມາຢ່າງຕໍ່ວ່າບໍ່ໄດ້.

ດັ່ງນັ້ນເລີ່ມແຕ່ຕົ້ນຊຸມປີ40ຂອງສະຕະວັດທີ່ຊາວພຸ້ນມາ, ປະຊາຊົນຊາວບ້ານປ່າຜັກເໜົ່າ, ນາສະເລາະໄດ້ຫັນປ່ຽນແນວຄິດ ແລະ ຕື່ນຕົວປະຕິວັດ. ເພາະຢູ່ໃນບ້ານເວລານັ້ນໄດ້ມີກອງປຸກລຸກຂົບຂວາຍຂອງຄົນລາວທີ່ແຜ່ຂະຫຍາຍມາຈາກເມືອງບົວລະພາ ແລະ ເມືອງມະຫາໄຊ, ແຂວງຄຳມ່ວນ. ອີກສ່ວນໜຶ່ງກໍມາຈາກເມືອງພີນ, ເຊໂປນ, ອ່າງຄຳແຂວງສະຫວັນນະເຂດພວກເຮົາກໍມີ. ພວກເພິ່ນເຫຼົ່ານັ້ນໄດ້ມາປຸກລຸກຂົບຂວາຍ, ກໍ່ສ້າງຮາກຖານການເມືອງຕາມເຊື້ອສາຍພີ່ນ້ອງ. ສະເພາະຜູ້ຍັງໜຸ່ມ, ຍັງໂສດນັ້ນພາຍຫຼັງທີ່ໄດ້ມາສ້າງຄອບຄົວ, ເປັນແກ່ວເປັນເຂີຍແລ້ວ, ພວກເພິ່ນຈຶ່ງທຳການປຸກລະດົມຂົບຂວາຍພໍ່ຕານ້າບ່າວ ແລະ ຊາວບ້ານລຸກຂຶ້ນເຮັດການປະຕິວັດຕ້ານການກົດຂີ່ຂົ່ມເຫັງຂອງຝຣັ່ງ. ຍ້ອນຊາວບ້ານໄດ້ມີຄວາມແຄ້ນ ແລະ ໜ່າຍໜ້າ"ພວກນາຍໃຫຍ່"ມານານແລ້ວນັ້ນ, ເມື່ອມີຜູ້ຊັກຊວນຂົບຂວາຍຊີ້ແນະແນວທາງຕໍ່ສູ້, ເຂົາເຈົ້າຈຶ່ງຕັດສິນໃຈເຂົ້າຮ່ວມຂະບວນການແຕ່ຫົວທີໂລດ.

ເວົ້າສະເພາະຢູ່ບ້ານປ່າຜັກເໜົ່ານັ້ນ, ຊາວບ້ານໄດ້ເອກະພາບເຂົ້າຮ່ວມຖັນແຖວປະຕິວັດໝົດທັງບ້ານເລີຍ. ຢູ່ພາຍໃນບ້ານ, ພວກເພິ່ນໄດ້

ຕັ້ງໜ່ວຍກອງຫຼອນ, ເຊິ່ງຊາວບ້ານເອີ້ນວ່າ"ກອງໂຈນ"ພ້ອມອຳນາດການປົກຄອງປະຕິວັດຂອງປະຊາຊົນຂຶ້ນ. ເຊິ່ງອຳນາດການປົກຄອງດັ່ງກ່າວແມ່ນພໍ່ເຖົ້າກ້ຽນ, ພໍ່ເຖົ້າຈານເພັງ ແລະ ພໍ່ເຖົ້າລີນຳພາ. ຕໍ່ມາກອງຂົນຂວາຍຂອງເພື່ອນບ້ານຫວຽດນາມ, ຈຶ່ງມາຮ່ວມປຸກລະດົມຊາວບ້ານໃຫ້ພ້ອມກັນຄຽດແຄ້ນຝຣັ່ງ. ເພາະຝຣັ່ງໄດ້ກົດຂີ່ຂົ່ມເຫັງປະຊາຊົນລາວ, ປະຊາຊົນຫວຽດນາມ, ປະຊາຊົນຂະແມ ແລະ ປະຊາຊົນປະເທດອື່ນໆອີກ. ດັ່ງນັ້ນປະຊາຊົນຊາວລາວ, ຊາວຫວຽດນາມ, ຊາວຂະແມພ້ອມກັບປະຊາຊົນຢູ່ໃນບັນດາປະເທດທີ່ຖືກກົດຂີ່ຕ້ອງສາມັກຄີກັນລຸກຂຶ້ນເຮັດການປະຕິວັດຕີຂັບໄລ່ຈັກກະພັດຝຣັ່ງໃຫ້ໜີໄປ, ເພື່ອປະຊາຊົນໄດ້ເປັນເຈົ້າຂອງບ້ານເກີດເມືອງນອນຂອງຕົນ. ນັ້ນແມ່ນຈຸດເລີ່ມຂອງການປ່ຽນແປງຫຼືບາດຍ່າງກ້າວທຳອິດ"ໄປສູ່ເສັ້ນທາງແຫ່ງການປະຕິວັດ!"ຂອງປະຊາຊົນທີ່ຢູ່ໃນຂອບເຂດຂອງບ້ານປ່າຜັກເໜົ່າ, ນາສະເລາະ, ເຫຼົ່າຫຼວງ, ນາຊູ ແລະ ບ້ານອື່ນໆຂອງທ້ອງຖິ່ນເມືອງວັງເວລານັ້ນ.

ໜ້າທີ່ຕົ້ນຕໍຂອງອຳນາດການປົກຄອງປະຕິວັດຂັ້ນບ້ານແມ່ນປຸກລະດົມປະຊາຊົນ, ສົ່ງລູກຫຼານເຂົ້າໃນຖັນແຖວປະຕິວັດ ແລະ ລ້ຽງດູກຳລັງດັ່ງກ່າວ. ໃນນັ້ນໜ້າທີ່ໃຈກາງຂອງຊາວບ້ານແມ່ນ, ການສົ່ງເຂົ້າສົ່ງອາຫານ ແລະ ບອກຂ່າວການເຄື່ອນໄຫວຂອງພວກ"ນາຍຖັ້ນ"ຢູ່ດ່ານນາຍົມໃຫ້ກຳລັງປະຕິວັດທີ່ເຄື່ອນໄຫວຢູ່ປ່າ. ພ້ອມກັນນັ້ນ, ພວກເພິ່ນຍັງອອກແຮງໂຄສະນາປຸກລະດົມຂະບວນຕໍ່ຕ້ານຝຣັ່ງໄປບ້ານໃກ້ຄຽງອື່ນໆອີກ. ປະຊາຊົນຊາວບ້ານທັງຜູ້ເຖົ້າ ແລະ ເດັກໆໃນບ້ານ, ພາກັນເຮັດໜ້າທີ່ຮັກສາຄວາມລັບ"ເປັນຫູເປັນຕາ!"ຊ່ອຍກຳລັງປະຕິວັດ. ພວກເພິ່ນເອກະ

ພາບປະຕິບັດຫຼັກການສາມບໍ່ຄື"ບໍ່ຮູ້!ບໍ່ເຫັນ!ບໍ່ຮູ້ຈັກ!"ເມື່ອເຫັນຄົນແປກໜ້າເຂົ້າມາບ້ານ, ເພື່ອຖາມຫາບຸກຄົນໃດໜຶ່ງຫຼືຊອກຮູ້ວຽກງານໃດໜຶ່ງທີ່ພົວພັນເຖິງກຳລັງປະຕິວັດ. ຊາຍໜຸ່ມຍິງສາວຫຼາຍຄົນ, ຕ້ອງສະຫຼະຄອບຄົວ ແລະ ສະໝັກເຂົ້າໃນຖັນແຖວປະຕິວັດໂດຍກົງ.ໃນຂະບວນການດັ່ງກ່າວ, ເດັ່ນກວ່າໝູ່ກໍຍັງແມ່ນ, ຄອບຄົວພໍ່ເຖົ້າກ້ຽນ, ພໍ່ເຖົ້າຈານເພັງ, ພໍ່ເຖົ້າລີ, ແມ່ເຖົ້າບົ້ງພ້ອມຄອບຄົວອື່ນອີກຈຳນວນໜຶ່ງ, ທີ່ໄດ້ສົ່ງລູກຫຼານເຂົ້າໃນຖັນແຖວປະຕິວັດນັບແຕ່ສາມຄົນຂຶ້ນໄປ ແລະ ບາງຄອບຄົວຍັງມີຄົນເຂົ້າໃນຖັນແຖວປະຕິວັດເຖິງຫ້າຄົນກໍມີ.

ນອກນັ້ນຊາວບ້ານຍັງອະນຸຍາດໃຫ້ເອົາປ່າບໍລິເວນແຄມບ້ານ, ສ້າງເປັນຖານທີ່ຕັ້ງສຳນັກງານຂອງກຳລັງປະຕິວັດທີ່ເຄື່ອນໄຫວຢູ່ປ່າ, ເຊິ່ງເວລານັ້ນເອີ້ນວ່າ"ສຳນັກງານປ່າຜັກເໜົ່າ". ໜ້າທີ່ຕົ້ນຕໍຂອງສຳນັກງານປ່າຜັກເໜົ່າແມ່ນ, ການປຸກລະດົມສ້າງກຳລັງປະກອບອາວຸດປະຕິວັດໃຫ້ໄດ້ຫຼາຍເທົ່າທີ່ຈະຫຼາຍໄດ້. ນອກນັ້ນພວກເພິ່ນຍັງເຮັດການພາທາງທະຫານພະນັກງານປະຕິວັດເຮົາ, ທີ່ເດີນທາງຜ່ານຈາກພາກເໜືອເພື່ອລົງພາກໃຕ້ຂອງລາວ. ເຊິ່ງເສັ້ນທາງຍ່າງລັດຂອງພວກເພິ່ນເວລານັ້ນ, ແມ່ນຈາກເມືອງບົວລະພາຫຼືເມືອງມະຫາໄຊ, ແຂວງຄຳມ່ວນມາຜ່ານນ້ຳກະປົກາຍບ້ານນາໂມ້, ໂງເຂົ້ານາຊູ, ກ້ຽວສູ່ເຫຼົ່າຫຼວງແລ້ວມາຢຸດພັກທີ່ບ້ານປ່າຜັກເໜົ່າ. ຮອດມື້ຕໍ່ມາ, ຊາວບ້ານຈຶ່ງພາພວກເພິ່ນຂຶ້ນພູຊ້າງແຫ່, ຫຼືກບັນດາບ້ານທີ່ບໍ່ແມ່ນພື້ນຖານ, ທີ່ເປັນສາຍຕິດຕໍ່ນັບແຕ່ບ້ານນາຍົມພຸ້ນ, ມາຈົນຮອດບ້ານຈຳນວນໜຶ່ງທີ່ມີເຂດແດນຕິດກັບຕີນພູຊ້າງແຫ່, ຕັດພື້ນຖານປະຕິວັດເຮົາອອກເປັນສອງເບື້ອງ, ເຊິ່ງໃນນັ້ນມີບ້ານດົງຕ້ອງ, ໜອງກະ

ປາງ ແລະ ບ້ານອື່ນໆທີ່ຢູ່ຕິດຕີນພູເບື້ອງຕາເວັນອອກ. ຕໍ່ມາຊາວບ້ານຈຶ່ງພາພວກເພິ່ນ, ລັດລຽງໃສ່ບ້ານພື້ນຖານທີ່ຢູ່ທາງໃຕ້ຄືບ້ານທ່າ, ບ້ານນາກົກແກທີ່ຂຶ້ນກັບຕາແສງນາເມືອງແສນແລ້ວ, ເດີນທາງລຽງເມືອງພິນກໍຄືແຂວງພາກໃຕ້. ສ່ວນຂາຂຶ້ນກໍເຊັ່ນດຽວ, ທາງພື້ນຖານບ້ານທ່າ ແລະ ບ້ານອື່ນໆທີ່ຢູ່ເບື້ອງໃຕ້ຈະພາພວກເພິ່ນຂຶ້ນພູຊ້າງແຫ່, ແລ້ວເລາະລັດກ້ຽວລຽງນອນຄ້າງຄືນຢູ່ບ້ານປ່າຜັກເໜົ່າອີກຕໍ່ໜຶ່ງ. ຈາກນັ້ນພວກເພິ່ນຈຶ່ງຍ່າງລັດປ່າ, ເຂົ້າດິນຄໍາມ່ວນ, ຂ້າມພູຫຼວງອອກໃສ່ຫວຽດນາມ, ແລ້ວເດີນທາງໄປຍັງນະຄອນຫຼວງຮ່າໂນ້ຍ. ເມື່ອຢຸດພັກຢູ່ຮັບຕ້ອນ214ແລ້ວ, ພວກເພິ່ນຈຶ່ງສືບຕໍ່ເດີນທາງກັບເຂົ້າແຂວງພາກເໜືອຂອງລາວ, ແລ້ວກາຍຂຶ້ນຊໍາເໜືອ.

ຈົນມາຮອດເດືອນຫ້າປີ1954, ໂດຍປະຕິບັດຕາມສັນຍາເຊີແນວກໍາລັງປະຕິວັດທີ່ເປັນຄົນບ້ານປ່າຜັກເໜົ່າຈໍານວນ7ສະຫາຍ, ເປັນເພດຍິງ2ສະຫາຍໄດ້ຖືກເລືອກ ແລະ ເດີນທາງຮ່ວມກັບກົມກອງ, ຂຶ້ນເຕົ້າໂຮມສອງແຂວງຢູ່ຄ້າຍສາມແປຂອງເມືອງຊໍາເໜືອ, ຕາມມະຕິຂອງສູນກາງແນວລາວອິດສະຫຼະ ແລະ ລັດຖະບານລາວຕໍ່ຕ້ານ. ສ່ວນກໍາລັງທີ່ຖືກສັບຊ້ອນໃຫ້ຢູ່ເຄື່ອນໄຫວສືບຕໍ່ໄປນັ້ນ, ກໍຍັງເອົາບ້ານປ່າຜັກເໜົ່າເປັນສູນເຕົ້າໂຮມ ແລະ ບັນຊາການເຄື່ອນໄຫວທາງລັບສືບຕໍ່ໄປ. ບຸກຄົນສໍາຄັນທີ່ໄດ້ຮັບມອບໝາຍໃຫ້ສືບຕໍ່ນໍາພາຂະບວນກອງຫຼອນຢູ່ທ້ອງຖິ່ນເວລານັ້ນ, ແມ່ນລຸງຊຽງເສີຍ. ຍ້ອນເພິ່ນໄດ້ຮັບແຕ່ງຕັ້ງໃຫ້ເປັນເຈົ້າເມືອງຢູ່ເມືອງວັງ-ນາຍົມຈາກລັດຖະບານລາວຕໍ່ຕ້ານ, ຢູ່ພາກໃຕ້ຫຼືແຄ້ວນໃຕ້ຂອງລາວ(ກອງໄຊຈັກກະພັດ)ໂດຍການຊີ້ນໍາ, ບັນຊາຂອງ ທ່ານຄໍາໄຕ ສີພັນດອນ ມາແຕ່ປີ1952ພຸ້ນນັ້ນ, ທາງການຈັດຕັ້ງຈຶ່ງມອບໃຫ້ເພິ່ນຢູ່ນໍາພາ

ຂະບວນການເຄື່ອນໄຫວຂອງປະຊາຊົນເມືອງວັງ-ນາຍົມສືບຕໍ່ໄປເລີຍ. ແຕ່ລຸງຊຽງເສີຍ, ຊໍ້າພັດແມ່ນລູກ, ແມ່ນຫຼານຂອງປະຊາຊົນບ້ານປ່າຜັກເໜົ່າດ້ວຍກໍາເນີດ. ເພາະສະນັ້ນ, ພາລະກິດແຫ່ງການເຄື່ອນໄຫວປະຕິວັດຂອງເພິ່ນ, ຈຶ່ງຕິດພັນກັບຄອບຄົວ ແລະ ບ້ານເກີດຢ່າງໜຽວແໜ້ນ.



ພາບວາດ: ເສັ້ນທາງເດີນ ຂອງກອງກໍາລັງປະຕິວັດກ່ອນປີ 1962

ຕົກມາໃນສະໄໝຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມຣິກາຮຸກຮານ ບ້ານປ່າຜັກເໜົ່າ, ນາສະເລາະກໍຄືບ້ານອື່ນໆຢູ່ທ້ອງຖິ່ນເມືອງວັງ, ຍັງເປັນບ້ານພື້ນຖານຢູ່ຕໍ່ມາ. ໜ້າທີ່ນໍາສົ່ງທະຫານ, ພະນັກງານປະຕິວັດຂຶ້ນລົງກ້ຽວເລາະລຽບຕາມສາຍພູຊ້າງແຫ່, ຈາກບ້ານທ່າມາທີ່ບ້ານປ່າຜັກເໜົ່າ ແລະ ຈາກບ້ານປ່າຜັກເໜົ່າໄປໃສ່ບ້ານທ່າ, ຍັງສືບຕໍ່ຈົນຮອດກາງປີ1962 ຈຶ່ງຢຸດເຊົາ. ເພາະພາຍຫຼັງທີ່ຈັກກະພັດອາເມຣິກາເຂົ້າມາຍຶດຄອງລາວແທນພວກຝຣັ່ງ, ທີ່ປົກຄອງລາວເປັນເວລາດົນນານມາແລ້ວນັ້ນ, ພວກເຂົາໄດ້ກໍາເອົາໄມ້ມືພ້ອມກົງຈັກເກົ່າຂອງຝຣັ່ງ. ຈາກນັ້ນຈັກກະພັດອາເມຣິກາຈຶ່ງຕັ້ງລັດຖະບານຫຸ່ນຂຶ້ນທີ່ນະຄອນຫຼວງວຽງຈັນ, ເພື່ອບໍລິຫານຮັບໃຊ້ແຜນລ່າອານານິຄົມແບບໃໝ່ຂອງພວກເຂົາຕໍ່ຈາກຝຣັ່ງ.

ເວົ້າສະເພາະຢູ່ບ້ານນາຍົມທີ່ເປັນຈຸດຝຣັ່ງຕັ້ງດ່ານ, ເຊິ່ງເອີ້ນວ່າ "ດ່ານນາຍົມ"ທີ່ຂຶ້ນກັບເມືອງເຊໂປນເມື່ອກ່ອນນັ້ນ, ພວກເຂົາໄດ້ຕັ້ງເປັນສອງປົດຄື, ປົດນາຍົມເໜືອ ແລະ ປົດນາຍົມໃຕ້ໂດຍເອີ້ນວ່າ"ກອງນາຍົມ" ຫຼື"ແຖບນາຍົມ", ເຊິ່ງບັງຄັບບັນຊາໂດຍນາຍກັບປີແຕັນອິນປິນ. ປົດນາຍົມເໜືອຮັບຜິດຊອບເຄື່ອນໄຫວຄວບຄຸມ, ນັບແຕ່ບ້ານນາຍົມເໜືອໄປຈົນຮອດບ້ານນາເຕົ໊, ບ້ານໄຮ່, ດົງບັງແຖມຍັງມີການຄວບຄຸມກວມໄປເຖິງຕາແສງນາເມືອງແສນ, ຕາແສງນາຮາງທີ່ມີເຂດແດນຕິດຈອດກັບເມືອງພີນ, ພະລານ ແລະ ເມືອງອ່າງຄໍາຢູ່ທາງທິດຕາເວັນອອກພຸ້ນ. ສ່ວນວ່າປົດນາຍົມໃຕ້, ພວກເຂົາມີໜ້າທີ່ເຄື່ອນໄຫວຄວບຄຸມນັບແຕ່ບ້ານນາຍົມໃຕ້ໄປຈົນຮອດຕາແສງນາສະເລາະ ແລະ ຕາແສງອຸດົມ(ເຂດບ້ານນາໂມ້-ນໍ້າກະບໍ່), ເຊິ່ງປັດຈຸບັນຍັງຂຶ້ນກັບເມືອງໄຊບົວທອງ, ແຂວງຄໍາມ່ວນ.

ເພື່ອຂະຫຍາຍບົດບາດອິດທິພົນຂອງພວກເຂົາ, ທະຫານສັດຕູປົດນາຍົມເໜືອໄດ້ຂະຫຍາຍກໍາລັງອອກຕັ້ງຄ້າຍທີ່ບ້ານນາຮາງ. ສ່ວນຢູ່ໃນເຂດຄວບຄຸມຂອງປົດນາຍົມໃຕ້ກໍເຊັ່ນດຽວ, ພວກເຂົາໄດ້ສົ່ງກໍາລັງອອກຕັ້ງຄ້າຍຢູ່ບ້ານນາສະເລາະພຸ້ນຄືກັນ. ເຊິ່ງຈຸດປະສົງຕົ້ນຕໍຂອງພວກເຂົາແມ່ນ, ເພື່ອສະກັດກັ້ນການເຄື່ອນໄຫວປະຕິວັດຢູ່ບ້ານນາສະເລາະ, ປ່າຜັກເໜົ່າ ແລະ ບ້ານຕ່າງໆທີ່ຢູ່ໃນຂອບເຂດບໍລິເວນໃກ້ຄຽງ, ທັງເປັນການຕັດທາງຜ່ານຂອງກໍາລັງປະຕິວັດໃນທ້ອງຖິ່ນດັ່ງກ່າວ.

ຕໍ່ສະພາບການນັ້ນ, ກໍາລັງກອງຫຼອນຂອງຝ່າຍປະຕິວັດຈຶ່ງຕັດສິນໃຈບຸກຕີ ແລະ ເຂົ້າຍຶດປົດນາຮາງເປັນບັ້ນຣົບທໍາອິດ. ຈາກນັ້ນກອງກໍາລັງພວກເຮົາຈຶ່ງຕີປົດປ່ອຍບ້ານນາສະເລາະ, ເປັນບັ້ນຣົບຕໍ່ມາ. ຕີປົດປ່ອຍປົດ

ບ້ານນາສະເລາະ, ແມ່ນບັ້ນທົດສອບໃຫຍ່ໃນການບັນຊາສູ້ຮົບທີ່ເຕັມຮູບແບບຂອງກອງຫຼອນປະຕິວັດຢູ່ທ້ອງຖິ່ນນາຍົມ. ບັ້ນຮົບນາສະເລາະ, ຖືເປັນການຖອດຖອນບົດຮຽນໃນການບັນຊາສູ້ຮົບ, ເພື່ອກະກຽມໃຫ້ແກ່ການກ້າວຂຶ້ນຕີປົດປ່ອຍປົດນາຍົມໃນຂັ້ນຕໍ່ໄປ.

ປົດປ່ອຍນາສະເລາະ, ຊາວບ້ານຫຼາຍຄົນຍັງຊົງຈຳ. ຫຼາຍຄົນຍັງເລົ່າເປັນເລື່ອງຕໍ່ກັນມາວ່າ, ເດິກທ່ຽງຄືນຂອງຄືນໜຶ່ງໃນຕົ້ນເດືອນຍີ່ປີ 1957ທ້ອງຟ້າມືດມິດ, ອາກາດໜາວເໜັບ. ຢູ່ທາງທິດເໜືອ ແລະ ທິດຕາເວັນຕົກຂອງປົດສັດຕູທີ່ບໍ່ຕິດກັບເຮືອນຊາວບ້ານນັ້ນ, ປະຊາຊົນຊາວບ້ານນາສະເລາະ, ປະກົດໄດ້ເຫັນລູກປືນສັນຍານໄຟເປັນເລົາສີແດງພຸ່ງຂຶ້ນທ້ອງຟ້າຕິດໆກັນເຖິງສາມລູກ, ແລ້ວຕາມມາດ້ວຍສຽງກຶກ!ກ້ອງ!ດັ່ງສະໜັ່ນຂອງລະເບີດໜັກ, ຈົນເຮັດໃຫ້ເຮືອນຂອງຊາວບ້ານທີ່ຢູ່ໃກ້ສັ່ນສະເທືອນ. ຈາກນັ້ນປືນນ້ອຍ, ປືນໃຫຍ່ຫຼາຍກະບອກ, ກໍແຂ່ງກັນພົ່ນເລົາໄຟສີແດງ ແລະ ສົ່ງສຽງດັງຈົນຫູດັບຕັບໄໝ້ໄປຖ້ວມຄ້າຍຂອງສັດຕູ. ອັນເຮັດໃຫ້ຊາວບ້ານຕື່ນສຽງປືນ, ຈຶ່ງພາກັນອຸ້ມລູກ, ເຈັ່ຍຫຼານແລ່ນລົງໜູບຊຸ້ນເຂົ້າກ້ອງຕະລ່າງເຮືອນ ແລະ ຕະຝັ່ງເຊຢ່າງຟ້າວຟັ່ງ.

ຍ້ອນຖືກຕີຢ່າງກະທັນຫັນ, ທະຫານສັດຕູປົດນາສະເລາະຈຶ່ງຕົກທ່າຮັບ. ພວກເຂົາພະຍາຍາມຕ້ານແຕ່ບໍ່ແຮງ, ຍ້ອນປືນໃຫຍ່ຫຼາຍກະບອກທີ່ເປັນກຳລັງໄຟຂອງພວກເຂົາ, ໄດ້ຖືກກອງຫຼອນເຮົາບຸກທຳລາຍກ່ອນແລ້ວ. ສະນັ້ນ, ຊາວບ້ານຈຶ່ງເຫັນພວກເຂົາໃຊ້ແຕ່ປືນນ້ອຍຍິງຕອບ. ປານນັ້ນພວກເຂົາທັງຍິງໂຕ້, ທັງເປັ່ງສຽງຮ້ອງແບບປະໝາດອອກມາວ່າ:

"ອິດສະຫຼະປືນຂີ້ໝ້ຽງ!ອິດສະຫຼະປືນຂີ້ໝ້ຽງ!"ມີບາງລາຍກໍຮ້ອງ

ອວດແບບຂຶງກ້ານ ແລະ “ແຂງຂີ້ຄັ່ງ”ອອກມາຕື່ມອີກວ່າ:

"ບັກອິດສະຫຼະ!ກູບໍ່ຢ້ານມຶງດອກ!"ເປັນສຽງດັງຈົບສຸດຄໍ. ນອກນັ້ນຊາວບ້ານນາສະເລາະ, ຍັງໄດ້ຍິນຄໍາຮ້ອງ"ເຊີນ!"ແບບທ້າທາຍອອກມາຊໍ້າແລ້ວຊໍ້າອີກວ່າ:

"ເຊີນ!!!ມຶງເກັ່ງມຶງເຂົ້າມາໂລດ!!"ພ້ອມຄໍາທ້າແບບສະຫາວອື່ນໆອີກ, ເຊິ່ງເປັນສຽງທີ່ຊາວບ້ານໄດ້ຍິນພວກເຂົາຮ້ອງອວດອອກມາ.

ແຕ່ເບິ່ງກໍາລັງໄຟ ແລະ ຜູ້ເປັນເຈົ້າສະຖານະການຂອງສະໜາມຮົບເວລານັ້ນ, ແມ່ນກອງຫຼອນພວກເຮົາ. ທາງປາກພວກເຂົາວ່າ"ບໍ່ຢ້ານ!" ເພາະອິດສະຫຼະມີແຕ່"ປືນຂີ້ໜ້ຽງ!". ແຕ່ໃນຕົວຈິງ, ພວກເຂົາຜັດປ່ຽນກັນແລ່ນເຂົ້າໄປຂຸດເອົາດິນວັດນາສະເລາະໃສ່ໝວກແລ້ວ, ມາສຸບໃສ່ຫົວເພື່ອເປັນການວອນຂໍສິ່ງສັກສິດຂອງວັດມາຊ່ອຍປົກປ້ອງ. ຈົນຍາທ່ານ ແລະຈົວນ້ອຍ, ທີ່ພາກັນໝູບຫຼົກລູກຫຼົ່ງຢູ່ກ້ອງທໍາແຈກໃກ້ຫັ້ນລໍາຄານ.

ເຫັນແນວນັ້ນກອງຫຼອນເຮົາ, ຍິ່ງເພີ່ມກໍາລັງໄຟ ແລະ ບຸກຕີທັງຍິດເຂົ້າໄປຫຼາຍປີກ. ມີບາງປີກກໍສາມາດຍຶດເລິກເຂົ້າຮອດໃຈກາງຄ້າຍຂອງພວກເຂົາ. ອັນເຮັດໃຫ້ທະຫານສັດຕູປົດນາສະເລາະ, ບໍ່ສາມາດຈັ້ງທ່າສູ້ຮົບຕໍ່ໄປໄດ້ອີກ, ພວກເຂົາຈຶ່ງພາກັນແບກປືນແລ່ນປະຄ້າຍ, ໜີໄປບ້ານຂີ້ຄັ່ງ, ແລ້ວຕັດຕີນໜາຕໍ່ໄປບ້ານນາຍົມໃນຄືນນັ້ນເລີຍ. ພວກເຂົາໄດ້ປະຊາກສົບຜູ້ເຄາະຮ້າຍທີ່ຍັງມີດິນເຕັມຫົວ, ພ້ອມຂຸມດິນວັດທີ່ພວກເຂົາຂຸດໄວ້ໃຫ້ທະຫານກອງຫຼອນ ແລະ ຊາວບ້ານເຫັນໃນວັນຕໍ່ມາ.

ເປັນອັນວ່າ"ປືນຂີ້ໜ້ຽງ"ກໍຍັງໃຊ້ໄດ້ຜົນ ແລະ "ລູກປືນທີ່ເຂົ້າໜ້ຽງ!"ກໍຍັງສາມາດ, ສົ່ງພວກເຂົາໄປ"ບ້ານໄກ່ບໍ່ຂັນ"ໄດ້ຄືກັນ. ບັ້ນຮົບຕີ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ